## ລາວມຽນມາ ເພີ່ມທະວີ ຮັດແໜ້ນສາຍພົວພັນມິດຕະພາບ

ໃນວັນທີ 16 ເມສານີ້, ທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສປປ ລາວ, ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຈໍ ທູ (Kyaw Thu), ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ແຫ່ງ ສະຫະພາບ ມຽນມາ ພ້ອມດ້ວຍຄະນະ ທີ່ພວມດໍາເນີນການຢ້ຽມຢາມ ສປປ ລາວ.

ໃນໂອກາດນີ້, ທ່ານ ດຣ. ທອງລຸນ ສີສຸລິດ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍຕໍ່ການມາຢ້ຽມຢາມ ແລະ ເຄື່ອນໄຫວເຮັດວຽກຢູ່ລາວ ຂອງ ທ່ານ ຈໍ ທູ ພ້ອມຄະນະ, ທີ່ໄດ້ຫາລືແລກປ່ຽນທັດສະນະ ເຊິ່ງກັນແລະກັນ ໃນການເສີມຂະຫຍາຍ ແລະ ຮັດແໜ້ນການພົວພັນສອງຝ່າຍ ເພື່ອການຮ່ວມມືປະສານງານກັນໃຫ້ແຕກດອກອອກຜົນຍິ່ງຂຶ້ນ.

ໃນໂອກາດການມາຢ້ຽມຢາມລາວລະຫວ່າງ ວັນທີ 10-16 ເມສາ 2008, ຄະນະຜູ້ແທນລາວນໍາໂດຍ ທ່ານ ບຸນເກີດ ສັງສົມສັກ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແລະ ທ່ານ ຈໍ ທູ (Kyaw Thu), ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ແຫ່ງ ສະຫະພາບ ມຽນມາ ໄດ້ພົບປະກັນ. ສອງຝ່າຍເພື່ອປຶກສາຫາລືແລກປ່ຽນທັດສະນະເຊິ່ງກັນແລະກັນກ່ຽວກັບການເສີມຂະຫຍາຍ ແລະ ຮັດແໜ້ນການພົວພັນສອງຝ່າຍ ລວມທັງວຽກງານຊາຍແດນ ແລະ ການຮ່ວມມືປະສານງານກັນ ລະຫວ່າງ ສປປ ລາວ ແລະ ສະຫະພາບ ມຽນມາ ໃນຂອບອາຊຽນ ກໍຄືຂອບການຮ່ວມມືອະນຸພາກພື້ນ ແລະ ສາກົນອື່ນໆ.